ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ: 377 /ລບ
ນະຄອນຫຼວງວຽງຈັນ, ວັນທີ 24.11.2015

# ດຳລັດ
# ວ່າດ້ວຍການເຄື່ອນໄຫວດ້ານການຂ່າວຂອງອົງການສື່ມວນຊົນ ຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍສື່ມວນຊົນ ສະບັບເລກທີ 01/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ມະຕິຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ກໍລະກົດ 2015 ສະບັບເລກທີ 07/ລບ, ລົງວັນທີ 10 ສິງຫາ 2015 ;
- ອີງຕາມ ໜັງສືສະເໜີ ສະບັບເລກທີ 1440/ຕປທ.ກກຂ.3, ລົງວັນທີ 07 ຕຸລາ 2015 ຂອງກະຊວງການຕ່າງປະເທດ.

## ລັດຖະບານ ອອກດຳລັດ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວດ້ານການຂ່າວຂອງ ອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຢ່າງມີປະສິດທິຜົນ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ, ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມ ແລະ ສົ່ງເສີມການຮ່ວມມືກັບຕ່າງປະເທດ ໃຫ້ນັບມື້ນັບກວ້າງຂວາງ.

**ມາດຕາ 2 ການເຄື່ອນໄຫວດ້ານການຂ່າວຂອງອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ**

ການເຄື່ອນໄຫວດ້ານການຂ່າວຂອງ ອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ແມ່ນການດຳເນີນວຽກງານດ້ານການຂ່າວຂອງສື່ມວນຊົນຕ່າງປະເທດ ກ່ຽວກັບສື່

ສິ່ງພິມ, ສື່ເອເລັກໂຕຼນິກ, ຜະລິດຕະພັນສື່ມວນຊົນ ລວມທັງການເຜີຍແຜ່ ແລະ ດຳເນີນກິດຈະກຳ ກ່ຽວກັບສື່ມວນຊົນຢູ່ ສປປ ລາວ.

ມາດຕາ 3 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ລວມທັງບຸກຄະລາກອນຂອງອົງການຈັດຕັ້ງດັ່ງກ່າວ ທີ່ເຄື່ອນໄຫວວຽກງານດ້ານການຂ່າວຢູ່ ສປປ ລາວ.

ມາດຕາ 4 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ, ຮ່ວມມືດ້ານສື່ມວນຊົນກັບຕ່າງປະເທດ, ພາກພື້ນ ແລະ ສາກົນບົນພື້ນຖານເຄົາລົບເອກະລາດ ອະທິປະໄຕ ເຊິ່ງກັນ ແລະ ກັນ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການເຄື່ອນໄຫວດ້ານການຂ່າວຂອງອົງການສື່ມວນຊົນຕ່າງປະເທດ

ມາດຕາ 5 ການເຄື່ອນໄຫວດ້ານການຂ່າວ

ອົງການສື່ມວນຊົນຕ່າງປະເທດ ສາມາດເຄື່ອນໄຫວດ້ານການຂ່າວ ໂດຍການສົ່ງນັກຂ່າວຂອງຕົນມາເຄື່ອນໄຫວເກັບກຳຂ່າວ ຫຼື ສ້າງຕັ້ງສຳນັກງານຂອງຕົນຢູ່ ສປປ ລາວ.

ມາດຕາ 6 ນັກຂ່າວຕ່າງປະເທດທີ່ຕິດຕາມຄະນະ

ນັກຂ່າວຕ່າງປະເທດ ທີ່ຕິດຕາມຄະນະໃດໜຶ່ງ ເພື່ອມາເຄື່ອນໄຫວເກັບກຳຂ່າວຢູ່ ສປປ ລາວ ຕ້ອງແຈ້ງລາຍຊື່, ອຸປະກອນ ແລະ ແຜນການເຄື່ອນໄຫວເພີ່ມເຕີມ (ຖ້າມີ) ໃຫ້ກະຊວງການຕ່າງປະເທດແຫ່ງ ສປປ ລາວ ລ່ວງໜ້າ ສາມ ວັນລັດຖະການ ເພື່ອພິຈາລະນາ ແລະ ອຳນວຍຄວາມສະດວກຕາມຄວາມເໝາະສົມ.

ມາດຕາ 7 ນັກຂ່າວຕ່າງປະເທດທີ່ມາເຄື່ອນໄຫວຢູ່ ສປປ ລາວ

ນັກຂ່າວຕ່າງປະເທດທີ່ສັງກັດຢູ່ອົງການສື່ມວນຊົນຕ່າງປະເທດ ຊຶ່ງບໍ່ມີສຳນັກງານຢູ່ ສປປ ລາວ ທີ່ມີຈຸດປະສົງເຂົ້າມາເຄື່ອນໄຫວດ້ານການຂ່າວຢູ່ ສປປ ລາວ ຕ້ອງຂໍອະນຸຍາດຈາກ ກະຊວງການຕ່າງປະເທດແຫ່ງ ສປປ ລາວ ລ່ວງໜ້າ ສິບຫ້າ ວັນລັດຖະການ.

ເອກະສານການຂໍອະນຸຍາດຂອງນັກຂ່າວຕ່າງປະເທດເຂົ້າມາເຄື່ອນໄຫວດ້ານການຂ່າວ ມີດັ່ງນີ້:

1. ໜັງສືສະເໜີ;
2. ປະຫວັດຫຍໍ້ຂອງນັກຂ່າວ;
3. ສຳເນົາບັດນັກຂ່າວ;
4. ແຜນການເຄື່ອນໄຫວລະອຽດ;
5. ບົດ, ຂ່າວ ຫຼື ຜະລິດຕະພັນດ້ານການຂ່າວກ່ຽວກັບ ສປປ ລາວ ໃນໄລຍະຜ່ານມາ (ຖ້າມີ);
6. ບັນຊີອຸປະກອນ;
7. ສຳເນົາໜັງສືຜ່ານແດນ ຊຶ່ງມີອາຍຸການນຳໃຊ້ໄດ້;
8. ຮູບຂະໜາດ 3 x 4 ຈຳນວນ ສອງໃບ.

**ມາດຕາ 8 ການສ້າງຕັ້ງສໍານັກງານຂອງອົງການສື່ມວນຊົນຕ່າງປະເທດ**

ອົງການສື່ມວນຊົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງສໍານັກງານຢູ່ ສປປ ລາວ ໃຫ້ປະກອບເອກະສານຍື່ນຕໍ່ ກະຊວງການຕ່າງປະເທດ ເພື່ອສະເໜີລັດຖະບານພິຈາລະນາອະນຸຍາດສ້າງຕັ້ງ.

ການສ້າງຕັ້ງສໍານັກງານຂອງອົງການສື່ມວນຊົນຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນອົງການສື່ມວນຊົນຕ່າງປະເທດ ທີ່ໄດ້ຈົດທະບຽນຢ່າງຖືກຕ້ອງຢູ່ປະເທດໃດໜຶ່ງ;
2. ມີໃບອະນຸຍາດຈາກອົງການສື່ມວນຊົນຕ່າງປະເທດ;
3. ມີສໍານັກງານ, ມີໃບອະນຸຍາດໃຫ້ນໍາໃຊ້ສະຖານທີ່ຈາກບຸກຄົນ ແລະ ນິຕິບຸກຄົນ ໂດຍມີການຮັບຮູ້ຈາກອົງການປົກຄອງທີ່ກ່ຽວຂ້ອງ;
4. ມີວັດຖຸປະກອນ ແລະ ເຕັກນິກ ຮັບໃຊ້ແກ່ວຽກງານການເຄື່ອນໄຫວດ້ານການຂ່າວຂອງຕົນ.

**ມາດຕາ 9 ເອກະສານປະກອບຂໍສ້າງຕັ້ງສໍານັກງານ**

ເອກະສານປະກອບຂໍສ້າງຕັ້ງສໍານັກງານຂອງອົງການສື່ມວນຊົນຕ່າງປະເທດ ມີດັ່ງນີ້:

1. ໜັງສືສະເໜີຂໍສ້າງຕັ້ງຈາກອົງການສື່ມວນຊົນຕ່າງປະເທດ;
2. ບົດວິພາກ ກ່ຽວກັບການຂໍສ້າງຕັ້ງສໍານັກງານຂອງອົງການສື່ມວນຊົນຕ່າງປະເທດຢູ່ ສປປ ລາວ;
3. ສໍາເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງອົງການສື່ມວນຊົນຕ່າງປະເທດ ທີ່ໄດ້ຮັບການຢັ້ງຢືນຈາກສະຖານທູດ ຫຼື ກະຊວງການຕ່າງປະເທດ ຂອງປະເທດກ່ຽວຂ້ອງ;
4. ໃບແຈ້ງສະຖານະດ້ານການເງິນຂອງອົງການສື່ມວນຊົນຕ່າງປະເທດ.

**ມາດຕາ 10 ການເປີດສໍານັກງານ**

ພາຍຫຼັງໄດ້ຮັບອະນຸຍາດສ້າງຕັ້ງຈາກລັດຖະບານ ອົງການສື່ມວນຊົນຕ່າງປະເທດ ຕ້ອງສົ່ງຜູ້ຕາງໜ້າຂອງຕົນມາສະເໜີຕົວຕໍ່ ກະຊວງການຕ່າງປະເທດແຫ່ງ ສປປ ລາວ ພາຍໃນເວລາ ສອງເດືອນ ແລ້ວຈຶ່ງສາມາດເປີດສໍານັກງານໄດ້.

ສໍານັກງານຂອງອົງການສື່ມວນຊົນຕ່າງປະເທດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຢູ່ ສປປ ລາວ ຈະບໍ່ມີຖານະນິຕິບຸກຄົນແຍກອອກຈາກອົງການສື່ມວນຊົນຕ່າງປະເທດ.

**ມາດຕາ 11 ການແຕ່ງຕັ້ງບຸກຄະລາກອນປະຈໍາສໍານັກງານ**

ການແຕ່ງຕັ້ງບຸກຄະລາກອນປະຈໍາສໍານັກງານຂອງອົງການສື່ມວນຊົນຕ່າງປະເທດ ມີດັ່ງນີ້:

1. ຫົວໜ້າສໍານັກງານ ແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຈາກອົງການສື່ມວນຊົນຕ່າງປະເທດ ແລະ ໄດ້ຮັບການເຫັນດີຈາກກະຊວງການຕ່າງປະເທດແຫ່ງ ສປປ ລາວ;
2. ຄະນະບັນນາທິການ, ນັກຂ່າວ ແລະ ວິຊາການເຕັກນິກດ້ານການຂ່າວທັງໝົດ ແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຈາກຫົວໜ້າສໍານັກງານຢູ່ ສປປ ລາວ ແລະ ໄດ້ຮັບການເຫັນດີຈາກກະຊວງການຕ່າງປະເທດແຫ່ງ ສປປ ລາວ.

**ມາດຕາ 12 ການຂໍວີຊາ**

ນັກຂ່າວຕ່າງປະເທດ ທີ່ມາເຄື່ອນໄຫວດ້ານການຂ່າວ ຫຼື ມາປະຈໍາຢູ່ ສໍານັກງານຂອງອົງການສື່ມວນຊົນຕ່າງປະເທດຢູ່ ສປປ ລາວ ໃຫ້ປະກອບເອກະສານຂໍວີຊານັກຂ່າວ M-B2 ຈາກກະຊວງການຕ່າງປະເທດແຫ່ງ ສປປ ລາວ ດັ່ງນີ້:

1. ໜັງສືສະເໜີ ແລະ ແບບຟອມຂໍວີຊາທີ່ຂຽນແລ້ວ;
2. ສຳເນົາໜັງສືຜ່ານແດນ;
3. ສຳເນົາບັດນັກຂ່າວ;
4. ຮູບຂະໜາດ 3 x 4 ຈຳນວນ ສອງໃບ.

## ໝວດທີ 3
## ສິດ, ໜ້າທີ່ ແລະ ພັນທະຂອງ ສຳນັກງານສື່ມວນຊົນ ແລະ ນັກຂ່າວຕ່າງປະເທດ

**ມາດຕາ 13 ສິດ ແລະ ໜ້າທີ່ຂອງ ສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ ແລະ ນັກຂ່າວຕ່າງປະເທດ**

ສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ ແລະ ນັກຂ່າວຕ່າງປະເທດ ມີສິດ ແລະ ໜ້າທີ່ເຄື່ອນໄຫວດ້ານການຂ່າວຢູ່ ສປປ ລາວ ດັ່ງນີ້:

1. ເຄື່ອນໄຫວວຽກງານດ້ານການຂ່າວຕາມແຜນການ ແລະ ປະເພດທີ່ຕົນໄດ້ຮັບອະນຸຍາດ;
2. ສະເໜີຂໍນຳເຂົ້າອຸປະກອນ ແລະ ພາຫະນະຮັບໃຊ້ວຽກງານດ້ານການຂ່າວ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
3. ຂໍວີຊາເຂົ້າ-ອອກເມືອງຫຼາຍຄັ້ງ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
4. ຈ້າງພະນັກງານ, ວິຊາການທ້ອງຖິ່ນ ຫຼື ຕ່າງປະເທດ ຕາມການເຫັນດີຈາກກະຊວງການຕ່າງປະເທດແຫ່ງ ສປປ ລາວ;
5. ຖືບັດນັກຂ່າວ ທີ່ອອກໃຫ້ໂດຍກະຊວງການຕ່າງປະເທດແຫ່ງ ສປປ ລາວ ໃນເວລາເຄື່ອນໄຫວວຽກງານ.

**ມາດຕາ 14 ພັນທະຂອງ ສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ ແລະ ນັກຂ່າວຕ່າງປະເທດ**

ສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ ແລະ ນັກຂ່າວຕ່າງປະເທດ ມີພັນທະດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ລະບຽບການ, ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງ ສປປ ລາວ;
2. ສົ່ງຜະລິດຕະພັນສື່ມວນຊົນ ໃຫ້ກະຊວງການຕ່າງປະເທດ ເພື່ອພິຈາລະນາ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາເນື້ອໃນກ່ອນການເຜີຍແຜ່;
3. ເສຍອາກອນລາຍໄດ້ຕາມກົດໝາຍ ສຳລັບນັກຂ່າວຕ່າງປະເທດປະຈຳຢູ່ ສປປ ລາວ ລວມທັງພະນັກງານທ້ອງຖິ່ນທີ່ເຮັດວຽກໃຫ້ສຳນັກຂ່າວ;
4. ສົ່ງເສີມການພົວພັນຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍຢ່າງສ້າງສັນ;
5. ສົ່ງບັດນັກຂ່າວ ແລະ ເອກະສານອື່ນຄືນໃຫ້ ກະຊວງການຕ່າງປະເທດແຫ່ງ ສປປ ລາວ ພາຍຫຼັງໝົດອາຍຸປະຕິບັດການດ້ານການຂ່າວຢູ່ ສປປ ລາວ.

## ໝວດທີ 4
## ການປ່ຽນແປງສະຖານະ ແລະ ການຍຸບເລີກສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ

**ມາດຕາ 15 ການປ່ຽນແປງສະຖານະຂອງ ສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ**

ສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ ທີ່ມີຈຸດປະສົງປ່ຽນແປງສະຖານະ ແລະ ການເຄື່ອນໄຫວຂອງຕົນ ຕ້ອງໄດ້ຍື່ນໜັງສືສະເໜີ ພ້ອມດ້ວຍບົດວິພາກ ກ່ຽວກັບກິດຈະກຳໃໝ່ ແລະ ເອກະສານອື່ນທີ່ກ່ຽວຂ້ອງເພື່ອຂໍອະນຸຍາດຈາກກະຊວງການຕ່າງປະເທດແຫ່ງ ສປປ ລາວ.

ມາດຕາ 16 ການຍຸບເລີກສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ

ສຳນັກງານຂອງອົງການສື່ມວນຊົນຕ່າງປະເທດ ຈະຖືກຍຸບເລີກໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຍຸບເລີກດ້ວຍຄວາມສະໝັກໃຈ ຊຶ່ງສຳນັກງານສື່ມວນຊົນຕ່າງປະເທດ ຕ້ອງຍື່ນໜັງສືສະເໜີຕໍ່ ກະຊວງການຕ່າງປະເທດແຫ່ງ ສປປ ລາວ ເພື່ອສະເໜີລັດຖະບານອະນຸຍາດຍຸບເລີກ;
2. ບໍ່ສາມາດເປີດສຳນັກງານຂອງຕົນ ພາຍໃນກຳນົດເວລາ ສາມເດືອນ ຫຼັງຈາກໄດ້ຮັບອະນຸຍາດ;
3. ມີການລະເມີດກົດໝາຍ ແລະ ລະບຽບການຢ່າງຮ້າຍແຮງ.

## ໝວດທີ 5
## ການເຄື່ອນໄຫວດ້ານການຂ່າວຂອງສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ

ມາດຕາ 17 ການສ້າງຜະລິດຕະພັນສື່ມວນຊົນ

ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ ທີ່ມີຈຸດປະສົງສ້າງຜະລິດຕະພັນສື່ມວນຊົນ ຕ້ອງນຳເອົາເນື້ອໃນມາຜ່ານກະຊວງການຕ່າງປະເທດ ແລະ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍສື່ມວນຊົນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 18 ການເຜີຍແຜ່ຜະລິດຕະພັນສື່ມວນຊົນ

ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ ທີ່ມີຈຸດປະສົງເຜີຍແຜ່ຜະລິດຕະພັນສື່ມວນຊົນຂອງຕົນ ຜ່ານສື່ມວນຊົນລາວ ຕ້ອງຍື່ນໜັງສືສະເໜີເຖິງກະຊວງການຕ່າງປະເທດ ເພື່ອພິຈາລະນາໂດຍປະສານສົມທົບກັບ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມກຳນົດເວລາດັ່ງນີ້:

1. ສາມສິບວັນ ກ່ອນການສາຍຮູບເງົາ;
2. ສິບວັນ ກ່ອນການວາງສະແດງ, ຈຳໜ່າຍ, ກະຈາຍສຽງ;
3. ຫ້າວັນ ກ່ອນການຖະແຫຼງຂ່າວ ແລະ ລົງໃນສື່ສິ່ງພິມ.

ມາດຕາ 19 ສື່ເອເລັກໂຕຣນິກຂອງຕ່າງປະເທດ

ການເຄື່ອນໄຫວດ້ານສື່ເອເລັກໂຕຣນິກຂອງສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

## ໝວດທີ 6
## ຄວາມຮັບຜິດຊອບຕໍ່ສື່ມວນຊົນຕ່າງປະເທດ

ມາດຕາ 20 ຄວາມຮັບຜິດຊອບຂອງກະຊວງການຕ່າງປະເທດ

ກະຊວງການຕ່າງປະເທດ ມີຄວາມຮັບຜິດຊອບຕໍ່ສື່ມວນຊົນຕ່າງປະເທດ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີລັດຖະບານ ພິຈາລະນາອະນຸຍາດສ້າງຕັ້ງສຳນັກງານອົງການສື່ມວນຊົນຕ່າງປະເທດ;
2. ຄົ້ນຄວ້າ, ພິຈາລະນາ ແລະ ອະນຸຍາດການເຄື່ອນໄຫວດ້ານການຂ່າວຂອງ ອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ;
3. ກວດກາເນື້ອໃນຜະລິດຕະພັນສື່ມວນຊົນຕ່າງປະເທດ;

4. ໃຫ້ຄຳແນະນຳ ແລະ ປຶກສາດ້ານລະບຽບຫຼັກການ ກ່ຽວກັບວຽກງານດ້ານການຂ່າວໃຫ້ແກ່ ອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ;
5. ປະສານສົມທົບກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການຕິດຕາມກວດກາ ແລະ ອຳນວຍຄວາມສະດວກການເຄື່ອນໄຫວດ້ານການຂ່າວຂອງ ອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ;
6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານສື່ມວນຊົນຕ່າງປະເທດໃຫ້ລັດຖະບານຢ່າງປົກກະຕິ.

**ມາດຕາ 21 ຄວາມຮັບຜິດຊອບຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮັບຜິດຊອບຄົ້ນຄວ້າ, ພິຈາລະນາກ່ຽວກັບວຽກງານສື່ມວນຊົນຕ່າງປະເທດ ຕາມການສະເໜີຂອງກະຊວງການຕ່າງປະເທດ ແລະ ຕາມພາລະບົດບາດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສື່ມວນຊົນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 22 ຄວາມຮັບຜິດຊອບຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການປະສານສົມທົບ ແລະ ໃຫ້ການຮ່ວມມືກັບກະຊວງການຕ່າງປະເທດ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຄຸ້ມຄອງກວດກາການເຄື່ອນໄຫວດ້ານການຂ່າວຂອງ ອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ ຕາມພາລະບົດບາດຂອງຕົນ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ;

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ນິຕິບຸກຄົນ, ບຸກຄົນ ຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 24 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນນາຍົກລັດຖະມົນຕີລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ